ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------00----------

ແຂວງສະຫວັນນະເຂດ

ພະແນກແຜນການ ແລະ ການລົງທຶນ

ເລກທີ..1961......../ພຜທ.ສຂ

ສະຫວັນນະເຂດ, ວັນທີ..10..ພະຈິກ 2022

ໜັງສືເຊີນ

ຮຽນ: ທ່ານ ຄະນະອຳນວຍການບໍລິສັດ ຫຸ້ນສ່ວນການລົງທຶນ TDG GLOBAL ທີ່ນັບຖື.

ເລື່ອງ: ຮຽນເຊີນທ່ານເຂົ້າມານຳສະເໜີບົດໂຄງການສ້າງຕັ້ງຟາມລ້ຽງງົວຄຸນນະພາບສູງ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ.

- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016.
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງສະຫວັນນະເຂດ ສະບັບເລກທີ 1480/ຈຂ.ສຂ, ລົງວັນທີ 29 ກໍລະກົດ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກແຜນການ ແລະ ການລົງທຶນແຂວງ.
- ອີງຕາມ ໃບສະເໜີຂອງບໍລິສັດ ສະບັບເລກທີ 0811/CV-TDG, ລົງວັນທີ 08 ພະຈິກ 2022.

ພະແນກແຜນການ ແລະ ການລົງທຶນແຂວງສະຫວັນນະເຂດ ຂໍຖືເປັນກຽດຮຽນເຊີນທ່ານ ຄະນະອຳນວຍການບໍລິສັດ ຫຸ້ນສ່ວນການລົງທຶນ TDG GLOBAL ເຂົ້າມານຳສະເໜີບົດໂຄງການສ້າງຕັ້ງຟາມລ້ຽງງົວຄຸນນະພາບສູງ ຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ.

- **ສະຖານທີ່:** ຫ້ອງປະຊຸມຊັ້ນ 3 ຂອງພະແນກແຜນການ ແລະ ການລົງທຶນແຂວງ.
- ສຳລັບວັນເວລາ ສະເໜີບໍລິສັດເປັນຜູ້ກຳນົດ ແລ້ວແຈ້ງມາຍັງພະແນກແຜນການ ແລະ ການລົງທຶນແຂວງ.

ດັ່ງນັ້ນ, ຈຶ່ງເຮັດໜັງສືເຊີນສະບັບນີ້ມາຍັງທ່ານ ແລະ ຫວັງຢ່າງຍິ່ງວ່າທ່ານຄົງສະຫຼະເວລາມານຳສະເໜີບົດໂຄງການ ຕາມທາງຄວນດ້ວຍ.

ດ້ວຍຄວາມນັບຖືຢ່າງສູງ.

ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ

ແຂວງສະຫວັນນະເຂດ ★ ພະແນກແຜນການແລະການລົງທຶນ ★ ແຜນການແລະການລົງທຶນ

ຄຳພຸຍ ສີບຸນເຮືອງ

Khamphoui SIBOUNHEUANG

สแกนด้วย CamScanner

Được quét bằng CamSca